ຂ່າວ NEWS
ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທຫລ ສັກວັກແຊັງ AstraZeneca ເຂັມທີ II




ໃນວັນທີ 29 ມິຖຸນາ 2021 ຜ່ານມານີ້, ດ້ວຍຄວາມເປັນຫ່ວງເປັນໄຍຕໍ່ສຸຂະພາບຂອງອະດີດການນຳ ແລະ ພະນັກງານພາຍໃນຂອງ ທຫລ, ທາງທະນາຄານແຫ່ງ ສປປ ລາວ ໄດ້ຈັດຕັ້ງຂະບວນການສັກຢາປ້ອງກັນການລະບາດຂອງພະຍາດໂຄວິດ-19, ຊະນິດ AstraZeneca ເຂັມ II ຂຶ້ນ ຢູ່ທີ່ໂຮງຮຽນອະນຸບານ ທຫລ, ບ້ານ ຊຽງຢືນ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ໃຫ້ກຽດເປັນປະທານນຳພາຂະບວນການດັ່ງກ່າວໂດຍທ່ານ ບຸນທະວີ ສຸກດາວົງ ເລຂາຄະນະບໍລິຫານງານຊາວໜຸ່ມ ທຫລ, ຄະນະແພດໝໍຈາກໂຮງໝໍເມືອງ ຈັນທະບູລີ, ຄະນະກົມ, ຄະນະພະແນກ, ວິຊາການ ແລະ ຄະນະຊາວໜຸ່ມ ທຫລ ເຂົ້າຮ່ວມທັງ ໝົດ 236 ທ່ານ.




ຈຸດປະສົງຂອງການສັກວັກແຊັງ AstraZeneca ເຂັມທີ II ໃນຄັ້ງນີ້; ແມ່ນສືບຕໍ່ໃຫ້ພະນັກງານທະນາຄານແຫ່ງ ສປປ ລາວ ທີ່ໄດ້ຮັບການສັກວັກແຊັງ AstraZeneca ເຂັມທີ I ໃນທ້າຍເດືອນ ເມສາ 2021 ຜ່ານມາທີ່ຮອດກຳນົດຄົບ 2 ເດືອນ ໃຫ້ໄດ້ຮັບວັກແຊັງເຂັມ II ຕາມຫຼັກການແພດແນະນຳ ຊຶ່ງເປັນການສ້າງຂະບວນການຕິດຕາມຊຸກຍູ້ການປະກອບເຂົ້າໃນການປະຕິບັດມາດຕະການປ້ອງກັນການແຜ່ລະບາດຂອງພະຍາດໂຄວິດ-19 ຕາມແຈ້ງການຂອງພາກລັດ.

**#ຂ່າວ ແລະ ພາບໂດຍ: ສົມພິດ ທຳມະວົງ.**

**ແລກປ່ຽນເງິນຕາຊະຊາຍ ຜິດລະບຽບກົດໝາຍບ້ານເມືອງ**